# ມິດຊາອາທິດທີ 15 ກຳນົດທຳມະດາປີ C

# ວັນທີ 14 ກໍລະກົດ 2019



**ພຣະວໍລະສານໂດຍນັກບຸນລູກາ 10, 25-37**

ໃນເວລານັ້ນ, ມີນັກກົດໝາຍຜູ້ໜຶ່ງຢາກຈັບຜິດພຣະອົງໄດ້ລຸກຂຶ້ນທູນວ່າ: ພຣະອາຈານ, ຂ້າພະເຈົ້າຈະຕ້ອງທຳຢ່າງໃດຈຶ່ງຈະໄດ້ຊີວິດນິລັນດອນ? ພຣະເຢຊູເຈົ້າກ່າວຕອບວ່າ: ໃນພຣະຄຳພີໄດ້ຂຽນໄວ້ວ່າຢ່າງໃດ, ທ່ານໄດ້ອ່ານວ່າຢ່າງໃດ? ຜູ້ນັ້ນທູນຕອບວ່າ: ຈົ່ງຮັກພຣະອົງພຣະເຈົ້າຂອງເຈົ້າສຸດດວງໃຈ, ສຸດວິນຍານ, ສຸດກຳລັງແລະສຸດຈິດໃຈຂອງເຈົ້າ. ແລ້ວຈົ່ງຮັກເພື່ອນມະນຸດຄືຮັກຕົວເຈົ້າເອງ. ພຣະເຢຊູເຈົ້າກ່າວວ່າ: ທ່ານຕອບຖືກຕ້ອງດີແທ້. ຈົ່ງປະຕິບັດຕາມແລ້ວທ່ານຈະໄດ້ຊີວິດ.

ແຕ່ນັກກົດໝາຍນັ້ນຢາກສະແດງວ່າຕົນເປັນຄົນທ່ຽງທຳແລ້ວ, ຈຶ່ງທູນພຣະເຢຊູເຈົ້າວ່າ: ເພື່ອນມະນຸດຂອງຂ້າພະເຈົ້ານັ້ນແມ່ນຜູ້ໃດແທ້? ພຣະເຢຊູເຈົ້າຈຶ່ງກ່າວຕອບວ່າ: ມີຄົນຜູ້ໜຶ່ງລົງມາແຕ່ນະຄອນເຢລູຊາແລມເພື່ອໄປເມືອງເຢລີໂກ, ເລີຍຕົກໃນມືຂອງພວກນັກປຸ້ນ. ພວກນັ້ນກໍປຸ້ນເອົາຊັບ, ພາກັນທຸບຕີລາວຈົນເກືອບຕາຍແລ້ວກໍປະໜີໄປ. ເວລານັ້ນ, ມີພຣະສົງອົງໜຶ່ງກາຍມາທາງນັ້ນ, ແນມເຫັນແລ້ວກໍກາຍໄປເລີຍ. ສຳມະເນນທີ່ກາຍມາໃກ້ໆ, ແນມເຫັນແລ້ວກໍກາຍໄປເລີຍດັ່ງດຽວກັນ. ຕໍ່ມາ, ມີຊາວຊາມາຣີຜູ້ໜຶ່ງເດີນທາງມາ, ພໍພົບເຫັນກໍເກີດມີຄວາມສົງສານ, ຈຶ່ງເຂົ້າໄປຫາ, ເອົານ້ຳມັນແລະນ້ຳອະງຸ່ນມາລ້າງແລະຫໍ່ພັນບາດແຜໃຫ້, ແລ້ວໂຊມຂຶ້ນຫລັງລາພາໄປທີ່ໂຮງແຮມແຫ່ງໜຶ່ງແລະປິ່ນປົວຮັກສາເຂົາ.

ມື້ຕໍ່ມາ, ລາວໄດ້ເອົາເງິນສອງຫລຽນໃຫ້ເຈົ້າຂອງໂຮງແຮມພ້ອມກັບສັ່ງວ່າ: ຈົ່ງປິ່ນປົວຮັກສາຄົນນີ້ໃຫ້ດີ, ແລະຖ້າທ່ານໃຊ້ຈ່າຍຫລາຍກວ່າອີກ, ເມື່ອຫລົບມາຂ້າພະເຈົ້າຈະທົດແທນໃຫ້.

ໃນສາມຄົນນີ້, ທ່ານເຫັນວ່າຜູ້ໃດແມ່ນເພື່ອນມະນຸດຂອງຜູ້ທີ່ຖືກພວກນັກປຸ້ນທຳຮ້າຍ? ນັກກົດໝາຍທູນຕອບວ່າ: ແມ່ນຜູ້ທີ່ມີຄວາມສົງສານເຂົານັ້ນແລ້ວ. ພຣະເຢຊູເຈົ້າກ່າວວ່າ: ເຊີນໄປດີ, ແລະທຳແບບດຽວກັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 10, 25-37**

ຜ່ານທາງຄຳສົນທະນາລະຫວ່າງນັກກົດໝາຍກັບພຣະເຢຊູເຈົ້າໃນບົດພຣະວໍລະສານວັນນີ້ ພວກເຮົາເຫັນວ່າ: ນັກກົດໝາຍທີ່ມາຫາພຣະເຢຊູເຈົ້າຮູ້ຈັກວິທີທີ່ຈະໄດ້ຮັບຊີວິດນິລັນດອນ, ເພາະເຂົາຮູ້ຈັກພຣະທຳບັນຍັດແຫ່ງຮັກຊຶ່ງພຣະເຢຊູເຈົ້າບອກໃຫ້ເຂົາ. ແຕ່ມີສິ່ງໜຶ່ງທີ່ພວກເຮົາບໍ່ແນ່ໃຈກ່ຽວກັບນັກກົດໝາຍນີ້ຄືເຂົາໄດ້ນຳເອົາພຣະບັນຍັດແຫ່ງຮັກນີ້ມາປະຕິບັດໃນຊີວິດຂອງເຂົາຫລືບໍ່? ເຂົາອາດຈະປະຕິບັດແຕ່ກັບຄົນທີ່ເຂົາຮູ້ຈັກເຊັ່ນ: ເພື່ອນມິດສະຫາຍ, ຍາດຕິພີ່ນ້ອງ ຫລືຄົນໃນຊົນຊັ້ນວັນນະດຽວກັນເທົ່ານັ້ນ. ສິ່ງນີ້ສະແດງອອກຜ່ານທາງຄຳຖາມຂອງເຂົາທີ່ຖາມພຣະເຢຊູເຈົ້າວ່າ: « ເພື່ອນມະນຸດຂອງຂ້າພະເຈົ້ານັ້ນແມ່ນຜູ້ໃດແທ້? ».

ເລື່ອງປຽບທຽບທີ່ພຣະເຢຊູເຈົ້າເລົ່າໃຫ້ນັກກົດໝາຍນີ້ຟັງເປັນເລື່ອງທີ່ຄ້າຍຄືກັບສະພາບຊີວິດເຂົາທີ່ສຸດ. ເພາະພຣະສົງແລະສຳມະເນນທີ່ພຣະເຢຊູເຈົ້າເລົ່າມານີ້ບໍ່ພຽງແຕ່ເປັນຄົນທີ່ໄດ້ຮຽນຮູ້ພຣະທຳບັນຍັດຂອງພຣະເຈົ້າເທົ່ານັ້ນ, ແຕ່ເຂົາຍັງເປັນຜູ້ທີ່ແປອະທິບາຍພຣະທຳບັນຍັດນັ້ນໃຫ້ຄົນອື່ນໄດ້ຮູ້ຈັກແລະເຂົ້າໃຈອີກດ້ວຍ. ເຖິງປານນັ້ນກໍດີ, ທັງສອງຄົນນີ້ກໍບໍ່ມີຄວາມເມດຕາສົງສານແລະຊ່ວຍເຫລືອຄົນທີ່ຖືກປຸ້ນແລະທຸບຕີຢູ່ຂ້າງທາງ. ແຕ່ແມ່ນຄົນຊາມາຣີຜູ້ໜຶ່ງ, ຄົນຕ່າງສາດສະໜາ, ຄົນທີ່ບໍ່ໄດ້ຮູ້ຈັກພຣະທຳບັນຍັດພຣະເຈົ້າ, ແຕ່ເຂົາພັດມີຄວາມເມດຕາສົງສານ, ມີການກະທຳທີ່ສອດຄ່ອງກັບສິ່ງທີ່ພຣະເຈົ້າບອກສອນ.

ຜ່ານທາງຕົວຢ່າງນີ້ຢາກສອນພວກເຮົາວ່າ: ການທີ່ຮູ້ຈັກພຣະທຳບັນຍັດຂອງພຣະເຈົ້ານັ້ນບໍ່ທຳໃຫ້ພວກເຮົາມີຊີວິດນິລັນດອນໄດ້, ແຕ່ຕ້ອງນຳເອົາສິ່ງທີ່ພຣະເຈົ້າສອນນັ້ນມາທຳໃຫ້ເປັນຈິງໃນຊີວິດຂອງພວກເຮົາ, ເມື່ອນັ້ນແລພວກເຮົາຈະໄດ້ຮັບບຳເນັດລາງວັນອັນແມ່ນຊີວິດນິລັນດອນ. ເພາະບໍ່ແມ່ນຜູ້ທີ່ເອີ້ນຫາພຣະເຈົ້າເອີຍ! ພຣະເຈົ້າເອີຍ! ທີ່ຈະໄດ້ເຂົ້າໃນອານາຈັກສະຫວັນ, ແຕ່ແມ່ນຜູ້ທີ່ນຳເອົາວາຈາຂອງພຣະເຈົ້າມາປະຕິບັດໃນຊີວິດຂອງຕົນ.

ພວກເຮົາແຕ່ລະຄົນກໍເຊັ່ນດຽວກັນ, ພວກເຮົາຜູ້ເປັນລູກພຣະເຈົ້າ, ຜູ້ໄດ້ຮຽນຮູ້ແລະຟັງວາຈາພຣະທຳບັນຍັດຂອງພຣະອົງແຕ່ລະວັນ, ແຕ່ລະອາທິດ, ພວກເຮົາໄດ້ໃຫ້ຄຳສອນແລະວາຈາຂອງພຣະເຈົ້າມີຊີວິດໃນຊີວິດຂອງພວກເຮົາບໍ? ຫລືພວກເຮົາເປັນເໝືອນນັກກົດໝາຍທີ່ມາຫາພຣະເຢຊູເຈົ້າວັນນີ້, ເປັນເໝືອນພຣະສົງແລະສຳມະເນນທີ່ຍ່າງກາຍຜູ້ທີ່ຕ້ອງການຄວາມຊ່ວຍເຫລືອຈາກພວກເຮົາບໍ? ຖ້າພວກເຮົາກະທຳແບບນີ້, ພວກເຮົາກໍຍັງຢູ່ໄກອານາຈັກຂອງພຣະເຈົ້າ. ແຕ່ຖ້າພວກເຮົາເປັນດັ່ງຄົນຊາມາຣີທີ່ຖືເອົາຄວາມຮັກເມດຕາສົງສານເປັນຫລັກໃນຊີວິດແລະພ້ອມທີ່ຈະຍື່ນມືໃຫ້ຄົນທີ່ຢູ່ໃນຄວາມຫຍຸ້ງຍາກ, ໃນຄວາມຂັດສົນ. ແນ່ນອນ, ພຣະເຈົ້າກໍຈະມີຄວາມເມດຕາສົງສານຕໍ່ພວກເຮົາເຊັ່ນດຽວກັນ ໂດຍໃຫ້ພວກເຮົາໄດ້ຢູ່ຮ່ວມກັບພຣະອົງໃນເມືອງສະຫວັນນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ